ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
******************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ວັນທີ 22/12/2016

**ມະຕິ**

**ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ**
**ຄັ້ງທີ 4 ປະຈໍາປີ 2016, ວັນທີ 22/12/2016**

ກອງປະຊຸມສະພາບໍລິຫານຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະໄໝສາມັນ ຄັ້ງທີ 4 ປະຈໍາປີ 2016 ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 22/12/2016 ທີ່ສໍານັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ດຣ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການທີ່ຖືກເຊີນເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງ ດັ່ງນີ້:**

1. ກອງປະຊຸມຮັບຊາບຕໍ່ຜົນການດໍາເນີນງານຂອງ ທຄຕລ ປະຈໍາໄລຍະ 11 ເດືອນຂອງປີ 2016, ແລະ ຕົວເລກຄາດຄະເນຜົນການດໍາເນີນງານທ້າຍປີ 2016.

2. ກອງປະຊຸມເຫັນດີຮັບຮອງໃຫ້ ທຄຕລ ຄົ້ນຄວ້າຄັດເລືອກບໍລິສັດທີ່ປຶກສາດ້ານການເງິນ, ທີ່ປຶກສາດ້ານກົດໝາຍ, ຜູ້ຄໍ້າປະກັນການຂາຍຮຸ້ນ ແລະ ຂຶ້ນແຜນງົບປະມານສໍາລັບການດໍາເນີນງານເພື່ອເພີ່ມທຶນຈົດທະບຽນ ທຄຕລ ແລ້ວນໍາສະເໜີສະພາບໍລິຫານຮັບຮອງຜ່ານຈົດໝາຍວຽນ.

3. ກອງປະຊຸມເຫັນດີຮັບຮອງແຜນການປະຈໍາປີ 2017 ຂອງ ທຄຕລ ລວມມີ: ແຜນການດໍາເນີນງານ, ແຜນຂະຫຍາຍຕາໜ່າງບໍລິການ ທຄຕລ, ແຜນການປະກອບວັດຖຸເຕັກນິກ-ກໍ່ສ້າງສ້ອມແປງ, ແຜນພະນັກງານ, ແຜນຕົວເລກທຸລະກິດປະຈໍາປີ 2017, ໃນນັ້ນວາງແຜນກໍາໄລປະຈໍາປີ 2017 ຈໍານວນ 250 ຕື້ກີບ.

4. ກອງປະຊຸມເຫັນດີຮັບຮອງແຜນຍຸດທະສາດໄລຍະຍາວນັບແຕ່ປີ 2016-2020 ຂອງ ທຄຕລ ເພື່ອນໍາສະເໜີກອງປະຊຸມຜູ້ຖືຮຸ້ນປະຈໍາປີ 2016 ພິຈາລະນາຮັບຮອງເອົາໃນຂັ້ນຕໍ່ໄປ.

5. ກອງປະຊຸມເຫັນດີຮັບຮອງໃຫ້ ທຄຕລ ສ້າງຕັ້ງພະແນກການຕະຫຼາດຂຶ້ນໃໝ່ ແລະ ມອບໃຫ້ ທຄຕລ ນໍາສະເໜີທະນາຄານແຫ່ງ ສປປ ລາວ ພິຈາລະນາຕາມລະບຽບການ.

ກອງປະຊຸມໄດ້ປິດລົງໃນເວລາ 16:30 ໂມງ ຂອງວັນດຽວກັນ.

**ປະທານສະພາບໍລິຫານ ທຄຕລ**

ດຣ. ບຸນເຫຼືອ ສິນໄຊວໍຣະວົງ